**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ເລກທີ......../ກຜທ.ສຄອ.01

ນະຄອນຫຼວງວຽງຈັນ, ວັນທີ..............................

# ບົດລາຍງານ

**ຮຽນ: ທ່ານ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.**
**(ໂດຍຜ່ານ ທ່ານ ຮອງລັດຖະມົນຕີຜູ້ຊີ້ນໍາ)**

**ເລື່ອງ: ລາຍງານຜົນກອງປະຊຸມສໍາມະນາວິທະຍາສາດ ພາຍໃຕ້ຫົວຂໍ້ “ ການນໍາໃຊ້ທ່າແຮງ ແລະຄວາມສາມາດບົ່ມຊ້ອນຂອງປະເທດ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມໃນ ສປປ ລາວ” ຄັ້ງວັນທີ 11 ມັງກອນ 2024.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄ້ວາວິໄຈການພັດທະນາ ແລະ ສູນຝຶກອົບຮົມ ສະບັບເລກທີ 3006/ກຜທ, ລົງວັນທີ 09 ທັນວາ 2022;
- ອີງຕາມແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1310/ຫສນຍ, ລົງວັນທີ 18 ກໍລະກົດ 2023.
- ອີງຕາມ ແຜນການເຄື່ອນໄຫວແຜນວຽກຂອງຫົວຂໍ້ຄົ້ນຄວ້າກ່ຽວກັບ “ການນໍາໃຊ້ທ່າແຮງ ແລະຄວາມສາມາດບົ່ມຊ້ອນຂອງປະເທດ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມໃນ ສປປ ລາວ’’

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ ແລະ ການລົງທຶນ ຂໍຮຽນລາຍງານມາທ່ານຊາບວ່າ ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໄດ້ຈັດກອງປະຊຸມວິທະຍາສາດ ໃນຫົວຂໍ້ “ການນໍາໃຊ້ທ່າແຮງ ແລະຄວາມສາມາດບົ່ມຊ້ອນຂອງປະເທດ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມໃນ ສປປ ລາວ’’ ໃນວັນທີ 11 ມັງກອນ 2024, ໂດຍການເປັນປະທານຂອງ ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ແລະ ມີຜູ້ແທນເຂົ້າຮ່ວມກອງປະຊຸມຈາກບັນດາກະຊວງອ້ອມຂ້າງ, ມະຫາວິທະຍາໄລແຫ່ງຊາດ, ສະຖາບັນຄົ້ນຄວ້າຕ່າງໆ ແລະ ບັນດາກົມພາຍໃນກະຊວງແຜນການ ແລະ ການລົງທຶນ ລວມທັງໝົດຈໍານວນ 80 ທ່ານ; ເຊິ່ງຜົນຂອງກອງປະຊຸມ ສາມາດສະຫຼຸບສັງລວມ ຄືດັ່ງນີ້:

**ຈຸດປະສົງຂອງກອງປະຊຸມ:**

ຈຸດປະສົງຂອງກອງປະຊຸມສໍາມະນາວິທະຍາສາດໃນຄັ້ງນີ້ແມ່ນເພື່ອຮັບຟັງການນໍາສະເໜີຜົນຂອງການຄົ້ນຄວ້າຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ແລະ ແລກປ່ຽນຄໍາຄິດຄໍາເຫັນດ້ານວິທະຍາສາດ ລະຫວ່າງບັນດາຊ່ຽວຊານ, ນັກວາງແຜນ, ວິຊາການທີ່ກ່ຽວຂ້ອງຈາກບັນດາຂະແໜງການຕ່າງໆ ລວມທັງບັນດາສະ ຖາບັນຄົ້ນຄວ້າຕ່າງໆ ກ່ຽວກັບທ່າແຮງ ແລະ ຄວາມສາມາດບົ່ມຊ້ອນ ທີ່ ສປປ ລາວ ສາມາດຂຸດຄົ້ນ ແລະ ນໍາໃຊ້ ເຂົ້າເພື່ອພັດທະນາຂະແໜງການເສດຖະກິດປາຍແຫຼມ; ພ້ອມນີ້ ຍັງເປັນການປຶກສາຫາລືກ່ຽວກັບທິດ

ທາງ ແລະ ມາດຕະການຊຸກຍູ້ການພັດທະນາຂະແໜງການເສດຖະກິດປາຍແຫຼມທີ່ໄດ້ກຳນົດ ເພື່ອຊຸກຍູ້ການຂະຫຍາຍຕົວເສດ ຖະກິດ ແລະ ສ້າງລາຍຮັບແຫ່ງຊາດ ຢ່າງຕໍ່ເນື່ອງ ແລະ ໝັ້ນຄົງ.

**ເນື້ອໃນຂອງກອງປະຊຸມ:**

– ກອງປະຊຸມ ເຫັນດີໃນການຕີລາຄາບັນດາທ່າແຮງບົ່ມຊ້ອນ ທີ່ປະເທດເຮົາ ສາມາດນຳໃຊ້ພັດທະນາຂະແໜງເສດຖະກິດປາຍແຫຼມ 4 ຂະແໜງ ລວມມີ 1) ຂະແໜງຜະລິດກະສິກຳ ແລະ ປຸງແຕ່ງ ກະສິກຳ (ລວມທັງການຜະລິດກະສິກຳສະອາດ; 2) ຂະແໜງການບໍລິການທ່ອງທ່ຽວ, ການຜະລິດອຸດສາຫະກຳປຸງແຕ່ງທີ່ເປັນຕ່ອງໂສ້ ຂອງການຜະລິດພາກພື້ນ ແລະ ການບໍລິການຂົນສົ່ງ ແລະ ໂລຈິສຕິກ) ແລະ 3 ຂະແໜງການເສດຖະກິດສະໜັບສະໜູນ (ຂະ ແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ຂະແໜງພະລັງງານສະອາດ ແລະ ຂະແໜງທຸລະກິດດີຈີຕອນ) ນອກຈາກນັ້ນ, ກອງປະຊຸມ ຍັງໄດ້ສະເໜີໃຫ້ຜູ້ຕາງໜ້າຈາກ ກະຊວງກະສິກຳ ແລະປ່າໄມ້, ກະຊວງຖະແຫຼງ ຂ່າວ, ວັດທະນະທຳ ແລະທ່ອງທ່ຽວ, ກະຊວງອຸດສາຫະກຳ ແລະການຄ້າ, ກະຊວງໂຍທາທິການ ແລະຂົນສົ່ງ, ກະ ຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີຄຳເຫັນຕໍ່ຄຳຖາມເຈາະຈີ້ມຕໍ່ຂະແໜງການຂອງຕົນ ເຊິ່ງສາມາດສະຫຼຸບຫຍໍ້ໄດ້ດັ່ງນີ້:

I. <u>**ຂະແໜງກະຊວງກະສິກຳ ແລະປ່າໄມ້:**</u>

❖ ນະໂຍບາຍ ໃນການຊຸກຍູ້ສົ່ງເສີມການຜະລິດພາຍໃນ

1) ໄດ້ສຳເລັດສ້າງ 2 ນະໂຍບາຍຄື: ① ນະໂຍບາຍແຫ່ງຊາດ ວ່າດ້ວຍ ການສົ່ງເສີມການລ້ຽງສັດ-ສັດນ້ຳ ແລະ ② ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ; ໄດ້ສ້າງ ແລະ ປັບປຸງ ນິຕິກຳ ຂອງກະຊວງ ທີ່ເປັນການຍູ້ແຮງການຜະລິດພາຍໃນ ແລະ ສົ່ງເສີມການຜະລິດເພື່ອສົ່ງອອກ ມີທັງໝົດ 5 ສະບັບ; ໄດ້ອອກຄຳສັ່ງ ຂອງ ທ່ານ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການເພີ່ມທະວີການຄຸ້ມ ຄອງການເກັບຊື້, ການປຸງແຕ່ງ ແລະ ການສົ່ງອອກມັນຕົ້ນ; ໄດ້ສ້າງເປັນໂຄງການສະເພາະ ມີ 07 ໂຄງການ (ໂຄງການລ້ຽງສັດ 6 ໂຄງການ ແລະ 1 ໂຄງການເຂົ້າ). ໃນນັ້ນ ມີ 4 ໂຄງການທີ່ເປັນບູລິມະສິດຄື: ໂຄງການ ຜະລິດເຂົ້າສົ່ງອອກໄປ ປະເທດ ບຣູໄນ ດາຣູຊາລາມ; ໂຄງການ ລ້ຽງງົວແມ່ພັນດີ, ລ້ຽງງົວທອມ ແລະ ຜະລິດສະໜອງນ້ຳເຊື້ອງົວພັນດີ; ໂຄງການ ລ້ຽງໝູພໍ່-ແມ່ພັນ ເພື່ອຜະລິດລູກນ້ອຍ ແລະ ໂຄງການລົງທຶນສ້າງໂຮງງານຜະລິດອາຫານສັດ.

❖ ດ້ານການຜະລິດ

ການປູກຝັງ:

- ຄາດໝາຍແຜນການ 5 ປີ ປະຕິບັດໃຫ້ໄດ້ 7,40 ລ້ານໂຕນ/ປີ.
- ຜ່ານການຈັດຕັ້ງປະຕິບັດຮອດກາງສະໄໝ ສະເລ່ຍໄດ້ 7,44 ລ້ານໂຕນ/ປີ, ທຽບໃສ່ແຜນການບັນລຸໄດ້ 100,8% ຫຼື ລື່ນແຜນການ 0,8%, ໃນນີ້ ອັນພົ້ນເດັ່ນ ແມ່ນ:

o ກາເຟ ເພີ່ມຂຶ້ນ 8%,

- ອ້ອຍ ເພີ່ມຂຶ້ນ 26%,
- ມັນຕົ້ນ ເພີ່ມຂຶ້ນ 31%,
- ຊາ ເພີ່ມຂຶ້ນ 2% ແລະ ພືດ ສິນຄ້າອື່ນໆ.

ທັງນີ້ ເນື່ອງຈາກໄດ້ ມີການຈັດຕັ້ງປະຕິບັດບັນດານະໂຍບາຍການຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າເພື່ອສົ່ງອອກ ໃຫ້ຫຼາຍຂຶ້ນໂດຍສະເພາະ ແມ່ນ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ, ຈຶ່ງເຮັດໃຫ້ຜູ້ປະກອບການຫັນມາລົງທຶນໃສ່ວຽກງານກະສິກຳເປັນສິນຄ້າໄດ້ຫຼາຍຂຶ້ນ.

ການລ້ຽງສັດ ແລະ ການປະມົງ:

ມາຮອດປັດຈຸບັນ, ມີຟາມລ້ຽງສັດທັງໝົດ 2.164 ຟາມ ມີສັດລ້ຽງ 5,73 ລ້ານ ກວ່າໂຕ, ເມື່ອທຽບໃສ່ປີ 2020 ເຫັນວ່າເພີ່ມຂຶ້ນເຖິງ 689 ຟາມ ຫຼື 46,71%, ສັດລ້ຽງເພີ່ມຂຶ້ນ 1.31 ລ້ານກວ່າໂຕ ຫຼື 29,82% (ຈາກ 1.475 ຟາມ, ສັດລ້ຽງ 4,41 ລ້ານກວ່າໂຕ ໃນປີ 2020.

- ການເຈລະຈາເປີດຕະຫຼາດ

ມາຮອດປະຈຸບັນ ສຳເລັດການເຈລະຈາ ແລະ ເຊັນອະນຸສັນຍາ ດ້ານສຸຂານະໄມ (SPS) ເພື່ອເປີດຕະຫຼາດກັບບັນດາປະເທດຄູ່ຄ້າແລ້ວ ຈຳນວນ 64 ລາຍການ ເພີ່ມຂຶ້ນໃໝ່ 26 ລາຍການຄື: ກັບ ສປ ຈີນ ຈຳນວນ 33 ລາຍການ; ກັບ ສສ ຫວຽດນາມ 16 ພືດ; ກັບ ຣາຊະອານາຈັກໄທ 15 ພືດ; ນອກນີ້ ຍັງມີລາຍການສິນຄ້າກະສິກຳ ຈຳນວນໜຶ່ງທີ່ກຳລັງ ເຈລະຈາ ດ້ານສຸຂານາໄມ ເພື່ອເປັນເງື່ອນໄຂເປີດຕະຫຼາດ ຄື:

- ກັບ ສປ ຈີນ: ລວມມີ 28 ລາຍການຄື: ໝາກມີ້, ລຳໄຍ, ຖົ່ວລຽນ, ໝາກມັງກອນ, ໝາກເຜັດ, ຖົ່ວດິນ ຂີງ, ໝາກນັດ, ຕົ້ນສາລີອ່ອນ, ກາເຟ, ສາລີຫວານ, ຝັກຫຼອກມ້ອນ, ໝາກເກົາ, ໝາກລີນຈີ່, ຢາງພາລາ, ໝາກກ້ອຍໄຂ່, ຊາ, ໄມ້ແຫ້ງ, ໝາກເດືອຍ, ແປ້ງມັນຕົ້ນ, ຫົວກະບຸກ, ໝາກຈອງບານ, ໝາກຄ້ຽວ, ກາກແປ້ງມັນຕົ້ນ, ໝາກພ້າວ, ໝາກແຕງລາຍ, ໝາກເຂືອຫວານ ແລະ ຜະລິດຕະພັນຊີ້ນ;
- ສສ ຫວຽດນາມ ມີ 5 ລາຍການພືດຄື: ກາເຟ, ຢາງພາລາ, ຖົ່ວດິນ, ໃບຢາສູບ, ບັນດາ ໝາກໄມ້ ແລະ ພືດຜັກສົດ ຈຳນວນໜຶ່ງ ແລະ ໝູເປັນ;
- ປະເທດໄທ ມີ 4 ລາຍການພືດຄື: ໝາກມັງກອນ, ໝາກນັດ, ເປືອກຕົ້ນຢາສູບ, ໝາກສະຕໍເບີຣີ ແລະ ແກ່ນຖົ່ວດິນ.

- ດ້ານການສົ່ງອອກ

  ບໍລິສັດນຳເຂົ້າ-ສົ່ງອອກ: ຈາກການສັງລວມ ມາຮອດປະຈຸບັນ ບໍລິສັດ ຫຼື ຫົວໜ່ວຍ ນຳເຂົ້າ-ສົ່ງອອກ ສິນຄ້າກະສິກຳ ແລະ ປັດໄຈການຜະລິດ ປະກອບມີ:

- ບໍລິສັດ ນຳເຂົ້າ ສິນຄ້າກະສິກຳ ແລະ ປັດໃຈການຜະລິດ ມີທັງໝົດ 77 ບໍລິສັດ ໃນນັ້ນ ສິນຄ້ານຳເຂົ້າຕົ້ນຕໍແມ່ນ ປະເພດ ປຸ໋ຍ, ຫົວອາຫານສັດ, ຢາປາບສັດຕູພືດ, ອຸປະກອນການຜະລິດ;

– ບໍລິສັດ ສົ່ງອອກ ລວມທັງໝົດ ຈຳນວນ 111 ບໍລິສັດ, ສິນຄ້າສົ່ງອອກສ່ວນໃຫຍ່ ແມ່ນ: ໄມ້ປູກ, ຢາງພາລາເຂົ້າ, ມັນຕົ້ນ, ສາລີ, ກ້ວຍ, ກາເຟ, ນ້ຳຕານ;
– ບໍລິສັດ ທີ່ເກັບຊື້ເພື່ອສົ່ງອອກ, ເກັບຊື້ເພື່ອປຸງແຕ່ງພາຍໃນ ແລະ ສົ່ງອອກ ມີຈານວນ 32 ບໍລິສັດ;
– ບໍລິສັດ ທີ່ເຮັດການຜະລິດ ເພື່ອຈຳໜ່າຍ ແລະ ສົ່ງອອກ ມີທັງໝົດ ຈຳນວນ 79 ບໍລິສັດ.

ມູນຄ່າການສົ່ງອອກ:

ການສົ່ງອອກຜະລິດຕະພັນກະສິກຳ ມູນຄ່າການສົ່ງອອກ ແຕ່ປີ 2021-2023 ສາມາດບັນລຸໄດ້ 4,28 ຕື້ໂດລາສະຫະລັດ ຫຼື 1.427 ລ້ານໂດລາ/ປີ, ທຽບໃສ່ ການສົ່ງອອກກ່ອນວາລະແຫ່ງຊາດ ເພີ່ມຂຶ້ນ 574,79 ລ້ານໂດລາ/ປີ (ປີ 2020 ສາມາດປະຕິບັດໄດ້ 852,83 ລ້ານໂດລາ) ໃນນັ້ນ:

- ມັນຕົ້ນ ມູນຄ່າ 336,25 ລ້ານໂດລາສະຫະລັດ/ປີ ລື່ນການສົ່ງອອກປົກກະຕິ 205,68% (ປີ 2020 ມູນຄ່າ 110 ລ້ານໂດລາ),

- ຢາງພາລາ ມູນຄ່າ 312,94 ລ້ານໂດລາສະຫະລັດ/ປີ ລື່ນການສົ່ງອອກປົກກະຕິ 58,88% (ປີ 2020 ມູນຄ່າ 196,95 ລ້ານໂດລາ),

- ໝາກກ້ວຍ 247,1 ລ້ານໂດລາສະຫະລັດ/ປີ ລື່ນການສົ່ງອອກປົກກະຕິ 28,7% (ປີ 2020 ມູນຄ່າ 192 ລ້ານໂດລາ),

- ກາເຟ 68,24 ລ້ານໂດລາສະຫະລັດ/ປີ ລື່ນການສົ່ງອອກປົກກະຕິ 41,6% (ປີ 2020 ມູນຄ່າ 48,19 ລ້ານໂດລາ).

ການສົ່ງອອກຜະລິດຕະພັນປຸງແຕ່ງກະສິກຳ ປະກອບມີ :

ປະຈຸບັນ ໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຈາການສັງລວມໃນເບື້ອງຕົ້ນ ມີທັງໝົດ 5.267 ແຫ່ງ ປະກອບມີ: ໂຮງສີເຂົ້າ ຈຳນວນ 3.516 ແຫ່ງ, ໂຮງງານຜະລິດນ້ຳຕານ 5 ແຫ່ງ, ໂຮງງານຜະລິດແປ້ງມັນຕົ້ນ 19 ແຫ່ງ, ໂຮງຊອຍມັນຕົ້ນ ແລະ ລານຕາກມັນຕົ້ນ 291 ແຫ່ງ,ໂຮງງານຜະລິດຝຸ່ນ 118 ແຫ່ງ, ໂຮງງານອາຫານສັດ 7 ແຫ່ງ, ໂຮງງານປຸງແຕ່ງໄມ້ 947 ແຫ່ງ, ໂຮງງານຂາສັດ 387 ແຫ່ງ. ໃນນັ້ນ, ມີ 5 ໂຮງງານສ້າງຕັ້ງໃໝ່ພາຍຫຼັງມອບຮັບ ຄື: ໂຮງງານຂ້າສັດ 1 ແຫ່ງ ໂຮງງານຜະລິດແປ້ງມັນຕົ້ນ 4 ແຫ່ງ, ໂຮງອົບ ມີທັງໝົດ 994 ແຫ່ງ, ໂຮງຄັດເມັດພັນເຂົ້າ 67 ແຫ່ງ; ສາງເກັບມ້ຽນຜົນຜະລິດກະສິກຳ ມີທັງໝົດ 1.557 ແຫ່ງ; ລານຕາກຜົນຜະລິດກະສິກຳມີທັງໝົດ 526 ແຫ່ງ.

ການສົ່ງອອກຜະລິດຕະພັນປຸງແຕ່ງກະສິກຳ ປະກອບມີ :

ການສົ່ງອອກ ສ່ວນໃຫຍ່ ແມ່ນ ກາເຟສຳເລັດຮູບ, ກາເຟໝາກຂຽວ, ເຂົ້າສານ, ແປ້ງມັນຕົ້ນ, ຢາງພາລາ, ນ້ຳຕານ, ກາກນ້ຳຕານ, ຜະລິດຕະພັນສັດ, ຜະລິດຕະພັນໄມ້, ໄມ້ເຟີນີເຈີ ເຫຼົ່ານີ້ເປັນຕົ້ນ ຊຶ່ງມີມູນຄ່າການສົ່ງອອກ ດັ່ງນີ້: ໃນປີ 2021 ມີມູນຄ່າ 299,67 ລ້ານໂດລາ, ເທົ່າກັບ 27,06% ຂອງມູນຄ່າສົ່ງອອກຜະລິດຕະ

ພັນກະສິກຳທັງໝົດ (1.107 ລ້ານໂດລາ); ໃນປີ 2022 ມີມູນຄ່າ 418,7 ລ້ານໂດລາ, ເທົ່າກັບ 28,81% ຂອງ ມູນຄ່າສິ່ງອອກຜະລິດຕະພັນກະສິກຳທັງໝົດ (1.453,15 ລ້ານໂດລາ); ໃນປີ 2023 ມີມູນຄ່າ 346,58 ລ້ານໂດລາ, ເທົ່າກັບ 24,03% ຂອງການສົ່ງອອກຜະລິດຕະພັນກະສິກາທັງໝົດ (1.442,1 ລ້ານໂດລາ).

❖ ວຽກຈຸດສຸມຕໍ່ໜ້າ

1). ສຸມໃສ່ຂຽນແຜນຍຸດທະສາດ ຊຸກຍູ້ສົ່ງເສີມການຜະລິດພືດບູລິມະສິດເປັນສິນຄ້າກະສິ ກຳ ທີ່ຕິດພັນກັບການສ້າງຕັ້ງໂຮງງານປຸງແຕ່ງ;

2). ອອກນິຕິກຳ ໃນການເພີ່ມທະວີຄວາມເຂັ້ມງວກ/ດ ໃນການເກັບຊື້, ປຸງແຕ່ງ ແລະ ສົ່ງອອກ ພືດ (ກາເຟ, ສາລີ);

3). ການຈັດສັນ ກຳນົດເຂດຜະລິດ ແລະ ການວາງແຜນນຳໃຊ້ທີ່ກະສິກຳ, ການປັບປຸງຄຸນນະພາບດິນກະສິກຳ ເພື່ອມີເຂດການຜະລິດ (Economy of Scale) ຊັດເຈນ, ແກ້ໄຂບັນຫາ ການຈັບຈອງທີ່ດິນ ທີ່ຖ່ວງດຶງການສົ່ງເສີມການຜະລິດ ໃນວົງກ້ວາງ;

4). ການຈັດຕັ້ງກຳລັງການຜະລິດ (ກຸ່ມ, ສະຫະກອນ, ສາມະຄົມ, ເຄືອຂ່າຍກະສິກອນ...) ແລະ ຮູບແບບການຜະລິດ ເປັນຕົ້ນ ກະສິກຳ ອິນຊີ-OA, ກະສິກຳ ທີ່ດີ-GAP, ສິນຄ້າທີ່ຢັ້ງຢືນທີ່ກຳເນີດ-GI, ເຕັກນິກນິເວດກະສິກຳ-SCV ແລະ ເຕັກນິກພູມປັນຍາທ້ອງຖິ່ນ;

5). ການປັບປຸງ ພັດທະນາໂຄງລ່າງພື້ນຖານການຜະລິດ ແລະ ເຕັກນິກເພື່ອລົດຜ່ອນຕົ້ນທຶນການຜະລິດ ເຊັ່ນ ຊົນລະປະທານ, ໂຮງອົບ, ໂຮງຄັດເມັດ, ລານຕາກ, ສາງ, ຫ້ອງວິໄຈຕ່າງໆ ແລະ ຕະຫຼາດຂາຍຍົກ/ຍ່ອຍ;

6). ການຄົ້ນຄວ້າທົດລອງ ແລະ ສົ່ງເສີມ ບໍລິການເຕັກນິກ, ຄວາມຮູ້ ຂໍ້ມູນຂ່າວສານ ຂອງລັດ (ສູນ, ສະຖານີ, ວິທະຍາໄລກະສິກຳ, ກປ ເມືອງ, ກປ ແຂວງ...)

7). ການນຳໃຊ້ ເຕັກນິກ ນະວັດຕະກຳໃໝ່, ແນວພັນ, ກົນຈັກ ແລະ ປັດໄຈການຜະລິດ ລວມທັງຜົນການຄົ້ນຄວ້າທົດລອງ ແນໃສ່ໃຫ້ຫຼຸດຜ່ອນຕົ້ນທຶນການຜະລິດ,ສອດຄ່ອງກັບສະພາບການປ່ຽນແປງຂອງດິນຟ້າອາກາດ;

8). ການເຊື່ອມໂຍງການຜະລິດ ກັບຕະຫຼາດເປັນຕົ້ນແມ່ນ ການປຸງແຕ່ງ, ແປຮູບ, ການສ້າງຍີ່ຫໍ້, ການກັກກັນ-ປ້ອງກັນພະຍາດ-ແມງໄມ້ ການຢັ້ງຢືນມາດຖານສຸຂານາໄມ ແລະ ສຸກຂະພາບສັດ ການເກັບຮັກສາການຂົນສົ່ງຈໍລະຈອນ ແລະ ອື່ນໆ;

9). ກົນໄກການລົງທຶນ ເປັນຕົ້ນ ລັດ, ຜູ້ປະກອບການທຸລະກິດ ຜູ້ຜະລິດ ຄູ່ຮ່ວມພັດທະນາ ໃນຮູບແບບສັນຍາຜູກພັນ;

10).ການພັດທະນາຊັບພະຍາກອນມະນຸດ ເປັນຕົ້ນແມ່ນການສ້າງນັກສົ່ງເສີມ ພັດທະນາກອນ, ນັກຄົ້ນຄວ້າທົດລອງ ຜູ້ປະກອບການກະສິກຳ ວິຊາການສີມືແຮງງານ ວິຊາການບ້ານ.ຫາກບໍ່ພຽງແຕ່ຜູ້ຈົບຊັ້ນປຣິນຍາ;

11). ການຄຸ້ມຄອງຄວາມສ່ຽງຈາກໄພພິບັດເປັນຕົ້ນ ແຫ້ງແລ້ງ ນ້ຳຖ້ວມ ດິນເຈື່ອນ ພະຍຸພະຍາດແມງໄມ້ສັດພືດລະບາດ ການສ້າງຄັງແຮ ການສ້າງລະບົບເຕືອນໄພລ່ວງໜ້າ ການຕອບໂຕ້ຮັບມື ແລະ ຟື້ນຟູ;

12). ການກຳນົດນະໂຍບາຍຊຸກຍູ້ ຊ່ວຍໜູນ ແລະ ນິຕິກຳຄຸ້ມຄອງ ທີ່ເປັນລະບົບຮັດກຸມ;

13). ການພັດທະນາທ່າແຮງ ແລະ ໂອກາດຂອງປ່າໄມ້ເຂົ້າປະກອບສ່ວນໃຫ້ການເຕີບໂຕເສດຖະກິດແຫ່ງຊາດ;

## II. ຂະແໜງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ

### ❖ ນະໂຍບາຍຕໍ່ວຽກງານທ່ອງທ່ຽວ

ສົ່ງເສີມວຽກງານການທ່ອງທ່ຽວຕິດພັນກັບການອະນຸຮັກຮີດຄອງປະປະພນີ, ວັດທະນະທຳມະຊາດ ແລະ ປະຫວັດສາດໃຫ້ຍືນຍົງ, ຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມໃນການທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ. ສົ່ງເສີມຜະລິດຕະພັນການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ ຊຸກຍູ້ເຄື່ອງຫັດຖະກຳທ້ອງຖິ່ນທີ່ເປັນເອກະລັກປັບປຸງການບໍລິການ ໂຮງແຮມ, ຣີສອດ, ເຮືອນພັກໃຫ້ມີຄຸນນະພາບ. ສົ່ງເສີມການລົງທຶນຂອງພາກທຸລະກິດຈາກພາຍໃນ ແລະ ຕ່າງປະເທດດ້ວຍການວາງນະໂຍບາຍເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆໃຫ້ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ການບໍລິການ, ການລົງທຶນປະຕູດຽວ. ສົ່ງເສີມການບໍລິການ ແລະ ຈຳຫນ່າຍສິນຄ້າພາຍໃນຢູ່ກັບທີເພື່ອເປັນການສ້າງລາຍໄດ້ໃຫ້ແກ່ ປະຊາຊົນ, ປັບປຸງພັດທະນາແຫຼ່ງທ່ອງທ່ຽວ ແລະ ພັດທະນາຂະແໜງການທ່ອງທ່ຽວໃຫ້ກາຍເປັນອຸດສາຫະກຳການທ່ອງທ່ຽວ ແລະ ຍືນຍົງ.

### ❖ ຍຸດທະສາດຮອງຮັບນັກທ່ອງທ່ຽວ

ພັດທະນາ ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວທາງທຳມະຊາດ ວັດທະນະທຳ ປະຫວັດສາດ ແລະ ກະສິກຳ ໃຫ້ມີຄຸນນະພາບ ມີຄວາມຍືນຍົງຕາມທິດ ສີຂຽວ ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ກາຍເປັນຂະແໜງເສດຖະກິດນຳຫນ້າ ແລະປະກອບສ່ວນຊ່ວຍໃຫ້ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ ຕາມນະໂຍບາຍຂອງລັດຖະບານ.

**ມີຄຸນນະພາບ**

ພັດທະນາຜະລິດຕະພັນ ແລະ ການບໍລິການໃຫ້ ມີຄຸນນະພາບ ສົ່ງເສີມການແຫ່ງນັ້ນ ພາຍໃນ ແລະ ພາກພື້ນ ລາຍຈ່າຍຂອງນັກທ່ອງ ທ່ຽວເພີ່ມຂຶ້ນ ຕໍ່ຄົນ/ປີ ເພີ່ມໄລຍະການພັກເຊົາ ຂອງນັກທ່ອງທ່ຽວ ຈາກ 5 ວັນ/ຄົນ/ຄັ້ງ ເພີ່ມຂຶ້ນເປັນ 7 ວັນ/ ຄົນ/ຄັ້ງ

**ມີຄວາມຍືນຍົງສີຂຽວ**

ສົ່ງເສີມການຜະລິດ ແລະການນຳໃຊ້ໃນອຸດສະຫະ ກຳການທ່ອງທ່ຽວແບບຍືນຍົງປົກປັກຮັກສາສິ່ງແວດລ້ອມ ແລະ ແລະ ລະບົບ ນິເວດວິທະຍາປົກປັກຮັກສາຊັບພະຍາກ ອນການທ່ອງທ່ຽວທີ່ບໍ່ສາມາດສ້າງຂຶ້ນທົດແທນໃຫມ່ໄດ້ ສົ່ງເສີມການທ່ອງທ່ຽວ ທາງວັດທະນະທຳ, ຄວາມ ເປັນເອກະລັກສະເພາະແລະ ມໍລະດົກຂອງ ທ້ອງຖິ່ນ

**ເຊື່ອມໂຍງການທ່ອງທ່ຽວ ກັບພາກພື້ນ ແລະ ສາກົນ**

ພັດທະນາການທ່ອງທ່ຽວ ໃຫ້ເປັນຂໍກຸນແຈ ໃນແກ່ ການພັດທະນາ ໂຄງລ່າງ ພື້ນຖານ ແລະ ພັດທະນາເສດຖະກິດ-ສັງຄົມ ຫັນປ່ຽນຈາກການເປັນປະ ເທດບໍ່ມີຊາຍແດນຕິດຈອດກັບທະເລ ກາຍມາເປັນທະເທດທີ່ມີເສັ້ນທາງເຊື່ອມຕໍ່ກັບບັນ ດາປະເທດໃນພາກພື້ນ ປັບປຸງການນຳອວຍຄວາມສະດວກຢູ່ດ່ານສາ ກົນ ແລະ ຕາມເສັ້ນທາງ ຫຼວງຕ່າງໆ

**ເປັນຂະແໜງເສດຖະກິດນຳຫນ້າ**

ເສີມຂະຫຍາຍທ່າແຮງໃຫ້ ເປັນຂະແໜງເສດຖະກິດ ທີ່ສຳຄັນ ແລະ ກະຈາຍ ລາຍຮັບລົງ ສູ່ປະຊາຊົນ ໃນເຂດຕົວເມືອງ ແລະ ຊົນນະບົດພັດທະນາການທ່ອງທ່ຽວ ຢູ່ແຕ່ລະເຂດແຄ້ວນ ແລະ ສ້າງຄວາມຫຼາກຫຼາຍຂອງ ແຫຼ່ງທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວ.

**ຊ່ວຍປະຊາຊົນຫລຸດພົ້ນອອກຈາກຄວາມທຸກຍາກ**

ສ້າງຄວາມເຂັ້ມແຂງໃຫ້ປະຊາຊົນ ທ້ອງຖິ່ນຮັບຮູ້ ແລະ ເຂົ້າໃຈກ່ຽວ ກັບ ການມີສ່ວນຮ່ວມໃນວຽກງານການທ່ອງທ່ຽວຊຸ້ສຸດຄົນຫນາແຮງປົ່ມຊ້ອນທາງດ້ານ ຊັບພະຍາກອນການທ່ອງທ່ຽວ ແລະ ພູມພັນຍາຂອງຊາວບ້ານ ບໍລິການໃຫ້ແກ່ນັກທ່ອງທ່ຽວ ສົ່ງເສີມໃຫ້ປະຊາຊົນຮູ້ຈັກການເຮັ ດທຸລະກິດຂະຫນາດນ້ອຍ ແລະ ບໍ່ ລິການນັກທ່ອງທ່ຽວ ຢູ່ໃນຊຸມຊົນ. ຊ່ວຍປະຊາຊົນເສີມຂະຫຍາຍກໍາ ລັງແຮງພາຍໃນບ້ານທີ່ມີທ່າແຮງປະກອບສ່ວນເຂົ້າໃນການບໍລິການ,ການບໍລິຫານຄຸ້ມຄອງແຫຼ່ງທ່ອງທ່ຽວພາຍໃນບ້ານ.

❖ **ຂໍ້ສະດວກ**

1. ໄດ້ເປີດບໍລິການດ່ານສາກົນ ເຂົ້າ - ອອກ ທຸກດ່ານ

2. ສາຍການບິນຕ່າງໆ ໄດ້ເລີ່ມກັບມາໃຫ້ບໍລິການຄືນໃຫມ່ ເຊັ່ນ: ວຽງຈັນ-ຄຸນມິງ, ວຽງຈັນ-ກວ່າງໂຈ, ວຽງຈັນ-ສາງຊາ, ວຽງຈັນ- ເສີນຕູ. ສ່ວນເສັ້ນທາງອື່ນ ແມ່ນມີແຜນຈະເປີດໃນໄວໆນີ້

3. ມີເສັ້ນທາງລົດໄຟເຊື່ອມໂຍງລະຫວ່າງ ລາວ-ຈີນ

4. ບັນດາໂຮງແຮມ, ເຮືອນພັກ, ຮ້ານອາຫານ ຫຼາຍແຫ່ງໄດ້ຜ່ານ ການຝຶກອົບຮົມ ມາດຕະຖານ

❖ **ອຸປະສັກ**

ສະພາບເສັ້ນທາງບົກເຊື່ອມຕໍ່ແຂວງຫາແຂວງ ແລະ ເສັ້ນທາງເຂົ້າຫາສະຖານທີ່ທ່ອງທ່ຽວຫຼາຍແຫ່ງ ຍັງບໍ່ທັນສະດວກໃຊ້ເວລາຫຼາຍໃຫ້ການສັນຈອນໃນຕົວເມືອງທ່ອງທ່ຽວມີແອອັດສະພາບຂ້ອນຂ້າງແອອັດ ໂດຍສະເພາະໃນຍາມເທດສະການ,ການຈອດລົດຕາມເສັ້ນທາງສາຍຫຼັກ ຍັງບໍ່ເປັນລະບຽບ ກີດຂວາງທາງຍ່າງຂອງ ນັກທ່ອງທ່ຽວ.

ພະນັກງານບໍລິການຢູ່ຫົວຫນ່ວຍທຸລະກິດທ່ອງທ່ຽວ ຍັງບໍ່ພຽງພໍ, ພະນັກງານນໍາທ່ຽວ ບາງພາສາ ຍັງມີຈໍານວນຈໍາກັດສະຖານທີ່ພັກ ແລະ ຮ້ານອາຫານ ທີ່ມີຄຸນນະພາບຍັງບໍ່ທັນມີຫຼາກ ຫຼາຍ, ບໍ່ສາມາດຮອງຮັບກຸ່ມທົວຂະຫນາດໃຫຍ່ໄດ້ສະຖານທີ່ທ່ອງທ່ຽວຫຼາຍໆແຫ່ງ ຍັງບໍ່ໄດ້ຮັບການຈັດສັນ, ກິດຈະກໍາ ການທ່ອງທ່ຽວໃຫມ່ ຍັງບໍ່ທັນຫຼາກຫຼາຍ, ມາດຕະການຮອງຮັບໃນ ກໍລະນີທີ່ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມ ເປັນຈໍານວນຫຼວງຫຼາຍ ຍັງ ບໍ່ທັນກຽມພ້ອມເທົ່າທີ່ຄວນ. ທຸລະກິດທ່ອງທ່ຽວຈໍານວນຫນຶ່ງ ບໍ່ໄດ້ຄໍານຶງເຖິງຜົນກະທົບ ສິ່ງແວດລ້ອມ ຄວາມຍືນຍົງ ແລະ ວັດທະນະທໍາອັນດີງາມຂອງຊາດ • ຜະລິດຕະສິນຄ້າທີ່ລະນຶກທີ່ເປັນຂອງລາວແທ້ໆ ຍັງບໍ່ທັນຫຼາກຫຼາຍ ແລະ ລາຄາຂ້ອນຂ້າງສູງປ້າຍຊີ້ບອກ, ບ່ອນໃຫ້ຂໍ້ມູນຂ່າວສານ, ສິ່ງພິມໂຄສະນາການທ່ອງທ່ຽວ ຜ່ານຊ່ອງທາງອອນລາຍ ແລະ off line ຍັງຈໍາກັດ.

## III. <u>ຂະແໜງອຸດສາຫະກໍາ ແລະ ການຄ້າ</u>

ໄລຍະຜ່ານມາ ກະຊວງ ອຄ ໄດ້ກໍານົດຍຸດທະສາດ, ນະໂຍບາຍ ແລະ ມາດຕະການເລັ່ງດ່ວນ ສໍາລັບການສົ່ງເສີມການຜະລິດສິນຄ້າ, ໂດຍສະເພາະສິນຄ້າທີ່ເປັນຍຸດທະສາດ ແລະ ສິນຄ້າປາຍແຫຼມ ເພື່ອທົດແທນການນໍາເຂົ້າ ແລະ ສົ່ງອອກ ເພື່ອນໍາເອົາເງິນຕາເຂົ້າມາປະເທດ ໂດຍມີການກໍານົດວິໄສທັດຮອດ 2030 ແລະ ແຜນຍຸດທະສາດ ພັດທະນາອຸດສາຫະກໍາ ແລະ ການຄ້າ ໄລຍະປີ 2016-2025; ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ການຄ້າ 5ປີ (2021-2025); ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ 5 ປີ) 2021-2025(; ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 5 ປີ) 2021-2025(; ການົດບັນດາມາດຕະການ, ໜ້າວຽກກິດຈະກໍາຜັນຂະຫຍາຍຕ່າງໆ ໃນການຈັດຕັ້ງປະຕິບັດຜ່ານມາ.

ສະເພາະພາກອຸດສາຫະກໍາປຸງແຕ່ງ, ໄລຍະຜ່ານມາໄດ້ສຸມໃສ່ ສົ່ງເສີມອຸດສາຫະກໍາປຸງແຕ່ງ ເພື່ອສົ່ງເສີມໃຫ້ການຊົມໃຊ້ພາຍໃນ ແລະ ສົ່ງອອກ ຕາມ 8 ອຸດສາຫະກໍາທີ່ເປັນທ່າແຮງ ເພື່ອກໍານົດສ້າງເປັນບັນຊີອຸດສາຫະກໍາທ່າແຮງບຸລິມີສິດໃນການສົ່ງເສີມ ໂດຍມີການກໍານົດລາຍການສິນຄ້າເປັນອັນລະອຽດສະເພາະເພື່ອຊຸກຍູ້ສົ່ງເສີມ .ລວມທັງການສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ຊາວຊ່າງຫັດຖະກໍາ ແລະ ກຸ່ມຜູ້ຜະລິດສິນຄ້າຫັດຖະກໍາ ເຊື່ອມໂຍງ

ກັບການທ່ອງທ່ຽວ ເພື່ອລາຍງານລັດຖະບານຊາບ ແລະ ຮັບຮອງ; ພ້ອມດຽວກັນນັ້ນ, ສ້າງຄວາມເຂັ້ມແຂງ ຈອນກ ໂດຍຜ່ານການຍົກປະສິດທິພາບການຜະລິດ, ການເຂົ້າເຖິງຕະຫຼາດ ແລະ ການເຂົ້າເຖິງສິນເຊື່ອຕ່າງໆ ຜ່ານທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ເພື່ອໃຫ້ ຈອນກ ສາມາດເຂົ້າເຖິງແຫຼ່ງທຶນໄດ້ສະດວກ ແລະ ວ່ອງໄວຂຶ້ນ. 8 ກຸ່ມອຸດສາຫະກໍາ ປະກອບມີ 1. ອຸດສາຫະກໍາປຸງແຕ່ງອາຫານ ແລະ ເຄື່ອງດື່ມ; 2. ອຸດສາຫະກໍາຕັດຫຍິບ ແລະ ເກີບ; 3. ອຸດສາຫະກໍາວັດສະດຸກໍ່ສ້າງ; 4. ອຸດສາຫະກໍາຜະລິດຈາກກະສິກໍາ ແລະ ປ່າໄມ້; 5. ອຸດສາຫະກໍາປຸງແຕ່ງແຮ່ທາດໂລຫະ ແລະ ເຄມີອຸດສາຫະກໍາ; 6. ກຸ່ມອຸດສາຫະກໍາເຄື່ອງໃຊ້ໄຟຟ້າ ແລະ ຊິ້ນສ່ວນເອເລັກໂຕຣນິກ; 7. ອຸດສາຫະກໍາພາຫະນະ ແລະ ກົນຈັກຮັບໃຊ້ກະສິກໍາ; ແລະ 8. ອຸດສາຫະກໍາສິ່ງພິມ ແລະ ເຄື່ອງຫຸ້ມຫໍ່.

ພ້ອມກັນນັ້ນ ກໍ່ໄດ້ສຸມໃສ່ ການຈັດຕັ້ງປະຕິບັດວຽກງານຂອງຄະນະສະເພາະກິດ19 /ກມສພ ມະຕິຕົກລົງ ວ່າດ້ວຍການແກ້ໄຂບັນຫາເຄັ່ງຮ້ອນ ຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນເງິນຕາ ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ໃນຂະແໜງອຸດສາຫະກໍາ ແລະ ການຄ້າ ໂດຍກໍານົດ ແລະ ສຸມໃສ່ປະຕິບັດ0 9 ກຸ່ມມາດຕະການ ທີ່ຂະແໜງ ອຄ ພວມກໍາລັງຈັດຕັ້ງປະຕິບັດ.

ຍຸດທະສາດການຜະລິດອຸດສາຫະກໍາທົດແທນການນໍາເຂົ້າ ແລະ ສົ່ງອອກ ໃນໄລຍະຕໍ່ໜ້າ ເພື່ອນໍາໃຊ້ຈຸດໄດ້ປຽບຕ່າງໆ ໃຫ້ກາຍເປັນທ່າແຮງໃນການສ້າງລາຍຮັບ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ໃນໄລຍະຕໍ່ໜ້າ ຕາມທັດສະນະແລ້ວ ຂໍມີຄໍາເຫັນດັ່ງນີ້:

ຍຸດທະສາດການຜະລິດອຸດສາຫະກໍາທົດແທນການນໍາເຂົ້າ: ເນັ້ນໃສ່ອຸດສາຫະກໍາປຸງແຕ່ງ ທີ່ນໍາໃຊ້ວັດຖຸດິບພາຍໃນເປັນຕົ້ນຕໍ ແນໃສ່ເພື່ອສ້າງມູນຄ່າເພີ່ມ ແລະ ຫລຸດຕົ້ນທຶນການຜະລິດ ຊຶ່ງຕິດພັນກັບຜົນຜະລິດຈາກກະສິກໍາ ແລະ ຊັບພະຍາກອນທໍາມະຊາດ. ສະນັ້ນ, ຈໍາເປັນຕ້ອງຮັບປະກັນການສະໜອງວັດຖຸດິບທີ່ພຽງພໍ ທັງປະລິມານ ແລະ ◌ຸຄຸນນະພາບ ລວມທັງການສະໜັບສະໜູນຈາກພາກລັດ ທາງດ້ານນະໂຍບາຍ ແລະ ທິດທາງການສົ່ງເສີມໃຫ້ເປັນທາງດຽວກັນ. ການຜະລິດທົດແທນການນໍາເຂົ້າ ຈະເນັ້ນນໃສ່ອຸດສາຫະກໍາປຸງແຕ່ງປະເພດ ອາຫານ ແລະ ເຄື່ອງດື່ມ ໂດຍເນັ້ນໃສ່ຜະລິດຜະລິດຕະພັນນໍ້າມັນສໍາລັບປຸງແຕ່ງອາຫານຈາກຖົ່ວ ,ພືດຜັກ ແລະ ສັດ ,ກະແລັມຈາກໝາກໄມ້ ,ພືດຜັກ ແລະ ນົມ ,ເສັ້ນໝີ່ສໍາເລັດຮູບ ແລະ ແປ້ງປຸງອາຫານ ,ເຂົ້າໜົມ ແລະ ໝາກໄມ້ອົບແຫ້ງສໍາເລັດຮູບ ,ອາຫານສໍາເລັດຮູບປະເພດປາ )ປາແດກ ,ປາເຄັມ ,ປາຢ້າງ(, ເຄື່ອງເທດ/ນໍ້າຊອດໝາກເລັ່ນ ,ໝາກເຜັດ/ນໍ້າປາ/ນໍ້າສະອີ້ວ/ນໍ້າສົມສາຍຊູ ,ເຫຼົ້າພື້ນບ້ານ ,ເຫຼົ້າໝາກໄມ້ ,ວາຍຈາກໝາກໄມ້ ,ນໍາ◌ໍຫວານໝາກໄມ້/ນໍ້ານົມ/ນໍ້າເຕົ້າຮູ້ )ນໍ້ານົມຖົ່ວເຫຼືອງ .((ເນັ້ນໃສ່ການຜະລິດຢູ່ເຂດພາກກາງ )ນະຄອນຫຼວງ ,ແຂວງວຽງຈັນ ,ແຂວງສະຫວັນນະເຂດ (ແລະ ພາກໃຕ້ )ແຂວງ ຈໍາປາສັກ .(ຄາດຄະເນຕອບສະໜອງຕະຫຼາດພາຍໃນ ແລະ ຫຼຸດຜ່ອນການນໍາເຂົ້າປະມານ 20%. ພ້ອມນັ້ນ, ເນັ້ນໃສ່ຜະລິດຕະພັນທີ່ສາມາດຜະລິດ ແລະ ຕອບສະໜອງໄດ້ຢ່າງພຽງພໍ ປະກອບມີ: ຜະລິດຕະພັນ ຊີມັງ, ເຫຼັກ, ນໍ້າສີ, ທໍ່ຢາງ, ນໍ້າດື່ມ, ຜະລິດຕະພັນປາແດກ. ພ້ອມນັ້ນ, ຊຸກຍູ້ການຜະລິດອື່ນ ເປັນຕົ້ນ: ອຸດສາຫະກໍາເຈັ້ຍ, ເຫຍື້ອເຈັ້ຍ, ແກ່ດເຈັ້ຍ, ຖົງຫຸ້ມຫໍ່, ເຈັ້ຍທິດຊູ ລວມທັງຜະລິດຕະພັນຫຸ້ມຫໍ່ອື່ນໆ ໂດຍຄຽງຄູ່ກັບການກໍານົດມາດຕະການການຫລຸດຜ່ອນການນໍາເຂົ້າ ໂດຍການກໍານົດມາດຕະການອື່ນທີ່ບໍ່ແມ່ນພາສີ (NTMs) ແລະ ອື່ນໆຕາມຄວາມເໝາະສົມ.

❖ **ຍຸດທະສາດການຜະລິດອຸດສາຫະກໍາສົ່ງອອກ**

ບູລິມາສິດທໍາອິດຈະເນັ້ນໃສ່ ການຊຸກຍູ້ສົ່ງເສີມ ແລະ ພັດທະນາ ຕິດພັນກັບການພັດທະນາພື້ນຖານໂຄງລ່າງສໍາລັບອຸດສາຫະກໍາ ຄື: ນິຄົມອຸດສາຫະກໍາ ໂດຍສະເພາະຕິດພັນກັບແລວທາງເສດຖະກິດ ລົດໄຟ ລາວ-ຈີນ. ອັນທໍາອິດແມ່ນເລັ່ງໃສ່ໃຫ້ດໍາລັດນິຄົມອຸດສາຫະກໍາ ໃຫ້ໄດ້ຮັບການຮັບຮອງ ໂດຍມີນະໂຍບາຍສົ່ງເສີມ ແລະ ສິດທິພິເສດ ທີ່ສາມາດດຶງດູດການພັດທະນາ ແລະ ລົງທຶນອຸດສາຫະກໍາປຸງແຕ່ງໃຫ້ຫລາຍຂຶ້ນ ໂດຍເນັ້ນໃສ່ບັນດາໂຄງການທີ່ໄດ້

ເຊັນບົດບັນທຶກ (MOU) ກັບລັດຖະບານ ເປັນຕົ້ນ ການພັດທະນາເປັນເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຂອງບໍລິສັດ ອຳມະຕະ ຊິຕີ້ລາວ ຈຳກັດ; ການພັດທະນານິຄົມອຸດສາຫະກຳຂອງບໍລິສັດ ສະຫວັນພັດທະນາ ພະລັງງານ ຈຳກັດ; ການພັດທະນານິຄົມອຸດສາຫະກຳໝູນວຽນອັດສະລິຍະ ອາຊີ - ໂປຕາສ ຂອງບໍລິສັດ ຊີໂນ ອາກຣີ ໂປຕາສ ຈຳກັດ ແລະ ອື່ນໆ. ພ້ອມນັ້ນ, ກໍ່ສຸມໃສ່ສົ່ງເສີມ ແລະ ການພັດທະນາ ການຂະຫຍາຍໂຄງການພັດທະນານິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ໄລຍະ II ຈຳນວນ 142 ເຮັກຕາ.

ຄຽງຄູ່ກັນ, ເນັ້ນໃສ່ການຜະລິດຕິດພັນກັບຜົນຜະລິດກະສິກຳທີ່ມີສ່ວນຮ່ວມຂອງປະຊາຊົນເປັນຈຳນວນຫລາຍ ຄື: ອຸດສາຫະກຳປຸງແຕ່ງກາເຟ, ອຸດສາຫະກຳຢາງພາລາ, ອຸດສາຫະກຳແປ້ງມັນຕົ້ນ ແລະ ອື່ນໆ. ພ້ອມນັ້ນເຫັນວ່າອຸດສາຫະກຳປຸງແຕ່ງຈາກແຮ່ທາດ ກໍ່ເປັນປັດໃຈທີ່ສຳຄັນ ເພື່ອສົ່ງເສີມການສ້າງມູນຄ່າເພີ່ມ. ອັນສະເພາະທີ່ເຫັນວ່າມີຄວາມເປັນໄປໄດ້ ຄວນສົ່ງເສີມການປຸງແຕ່ງປຸ໋ຍເຄມີ ໂດຍນຳໃຊ້ເງື່ອນໄຂການຜະລິດເກືອກາລີທີ່ລາວເຮົາມີທ່າແຮງ ແລະ ອຸດົມສົມບູນ ຊຸກຍູ້ໃຫ້ເກີດເປັນອຸດສາຫະກຳຕ່ອງໂສ້ໝູນວຽນປະເພດ ເກືອກາລີ-ໂປຕາສ ແລະ ອື່ນໆ.

1) ອຸດສາຫະກຳປຸງແຕ່ງປະເພດໃດທີ່ພວກເຮົາຈະສົ່ງເສີມໃຫ້ກາຍເປັນອຸດສາຫະກຳທີ່ນຳໜ້າພາທາງ ແລະ ສາມາດ ກາຍເປັນຕ່ອງໂສການຜະລິດພາກພື້ນໄດ້ ລວມທັງ ຕາມແລວທາງລົດໄຟລາວ-ຈີນ, ຕາມແລວເສັ້ນທາງຫຼວງແຫ່ງຊາດທີ່ເປັນທ່າແຮງຕ່າງໆ?. ທິດທາງ ແລະ ນະໂຍບາຍສົ່ງເສີມ ມີຄືແນວໃດ?.

ຕອບ:

- ປະຈຸບັນໄດ້ມີການຢັ້ງຢືນສິນຄ້າ 4 ລາຍການ ທີ່ເຫັນວ່າສາມາດຜະລິດ ແລະ ສະໜອງໃຫ້ກັບພາຍໃນຢ່າງພຽງພໍ ເຊິ່ງເປັນໄປໄດ້ທີ່ຈະຫຼຸດຜ່ອນການນຳເຂົ້າ ມີ: ❶ ນ້ຳສີ; ❷ ສັງກະສີ ແລະ ອາລູຊິ້ງ; ❸ ທໍ່ຢາງ ແລະ ❹ ເຫຼັກ.

- ສ່ວນອຸດສາຫະກຳປຸງແຕ່ງປະເພດໃດທີ່ຈະສົ່ງເສີມການກາຍເປັນອຸດສາຫະກຳທີ່ນຳໜ້ານັ້ນ ອາດຈະຍັງຕ້ອງລໍການປະເມີນຄືນອຸດສາຫະກຳທ່າແຮງ 8 ຂະແໜງໃນການຈັດຕັ້ງປະຕິບັດແຜນການ 5 ປີ ແລະ ສຶກສາແນວໂນ້ມການປ່ຽນແປງຂອງເສດຖະກິດ ແລະ ຕະຫຼາດເພີ່ມເຕີມ.

- ຢ່າງໃດກໍ່ດີ, ຜົນປະໂຫຍດຈາກການມີລົດໄຟລາວ-ຈີນຄວາມໄວສູງ ເຊື່ອມຈອດກັບປະເທດເພື່ອນບ້ານສ້າງເງື່ອນໄຂທີ່ດີແກ່ການດຶງດູດການລົງທຶນ ແລະ ສ້າງໂອກາດໃຫ້ລາວກາຍເປັນຖານການຜະລິດສິນຄ້າອຸດສາຫະກຳສຳຄັນຂອງພາກພື້ນ ດັ່ງນັ້ນ, ອີກໜຶ່ງວຽກຈຸດສຸມຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ຈຶ່ງແມ່ນການສົ່ງເສີມວຽກງານນິຄົມອຸດສາຫະກຳ ທີ່ເອື້ອອຳນວຍແກ່ການລົງທຶນ ທີ່ຄວນມີນະໂຍບາຍພິເສດຕ່າງໆ ແຕກຕ່າງຈາກເຂດເສດຖະກິດພິເສດ ເພື່ອກະຕຸກຊຸກຍູ້ ແລະ ດຶງດູດການລົງທຶນຈາກຕ່າງປະເທດໃຫ້ຫຼາຍຂຶ້ນ ແລະ ສ້າງຖານການຜະລິດສິນຄ້າທີ່ຫຼາກຫຼາຍຂຶ້ນ.

- ອີງຕາມຜົນການຄົ້ນຄວ້າຂອງຊຽວຊານຈາກເກົາຫຼີ ໄດ້ແນະນຳໃຫ້ມີການສົ່ງເສີມ (1) ອຸດສາຫະກຳຊີວະພາບສະອາດ (Green Bio), ອຸດສາຫະກຳພະລັງງານທີ່ຍືນຍົງ (White Bio) ແລະ (3) ອຸດສາຫະກຳດິຈິຕອນ ເນື່ອງຈາກຄວາມຕ້ອງການຂອງຕະຫຼາດພາກພື້ນສູງ ເປັນເງື່ອນໄຂໃນການສົ່ງເສີມການສົ່ງອອກຂອງ

ລາວ ແລະ ເມື່ອທັງສາມຂະແໜງອຸດສາຫະກຳມີຄວາມເຂັ້ມແຂງກໍ່ຈະເປັນເງື່ອນໄຂດຶງດູດການລົງທຶນທາງດ້ານອຸດສາຫະກຳໄດ້ຫຼາຍຂຶ້ນຕື່ມ.

ທິດທາງ ແລະ ນະໂຍບາຍສົ່ງເສີມ ຂະແໜງອຸດສາຫະກຳ ແລະ ການຄ້າ ແມ່ນຈະສຸມໃສ່ ປະຕິບັດ0 9 ກຸ່ມມາດຕະການ ຄື :❶ ການຄຸ້ມຄອງລາຄາສິນຄ້າ; ❷ ການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກສິນຄ້າ; ❸ ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ; ❹ ການສົ່ງເສີມການຜະລິດເປັນສິນຄ້າ; ❺ ການສົ່ງເສີມການຊົມໃຊ້ຜະລິດຕະພັນພາຍໃນ; ❻ ; ແລະ ❼ ການຄຸ້ມຄອງການສະໜອງນໍ້າມັນເຊື້ອໄຟ ໂດຍຄົ້ນຄວ້າສ້າງເປັນແຜນວຽກຈຸດສຸມຢ່າງລະອຽດ ນັບແຕ່ເດືອນ7 - 12ປີ 2023 ເພື່ອເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງຄະນະດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນສູງ; ❽ ການຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳ ແລະ ❾ ການໂຄສະນາ ແລະ ປະຊາສໍາພັນ ລວມເປັນ 09 ກຸ່ມມາດຕະການ (ລາຍລະອຽດມີບົດລາຍງານສັງລວມສະເພາະ).

ຄຽງຄູ່ກັນ, ຈຳເປັນຕ້ອງໄດ້ມີການປະເມີນຄືນການຈັດຕັ້ງປະຕິບັດຂອງອຸດສາຫະກຳທ່າແຮງຜ່ານມາ ຄົ້ນຄວ້າອຸດສາຫະກຳທ່າແຮງອື່ນທີ່ເປັນໄປໄດ້ ຈາກຫຼາຍໆມູມມອງ (ຂະແໜງການກ່ຽວຂ້ອງ, ສະຖາບັນຄົ້ນຄວ້າ ແລະ ຊ່ຽວຊານຈາກຕ່າງປະເທດ) ຍັງຄວາມຕ້ອງໄດ້ສຶກສາຄວາມຕ້ອງການ ແລະ ແນວໂນ້ມການປ່ຽນແປງຂອງຕະຫຼາດໂລກແລະ ຕະຫຼາດພາກພື້ນ ອີກດ້ວຍ. ປັດໃຈພາຍໃນ ເນັ້ນໃຫ້ຄວາມສຳຄັນສົ່ງເສີມການຫັນເປັນອຸດສາຫະກຳຢ່າງແທ້ຈິງ ເພື່ອໃຫ້ເກີດການຜະລິດໃຫ້ຫຼາຍຂຶ້ນ, ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງສະພາບແວດລ້ອມ, ປັບປຸງນະໂຍບາຍ ແລະ ກົນໄກສົ່ງເສີມການລົງທຶນເພື່ອດຶງດູດການລົງທຶນໃຫ້ຫຼາຍຂຶ້ນ, ສ້າງຄວາມເຂັ້ມແຂງແກ່ຫົວໜ່ວຍຜູ້ຜະລິດທີ່ມີຢູ່ ແລະ ການສ້າງຕ່ອງໂສ້ການສະໜອງທີ່ເຂັ້ມແຂງພາຍໃນປະເທດ.

## IV. <u>ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.</u>

### ❖ ສະພາບລວມ

ໂດຍລວມແລ້ວ ຂະແໜງແຮງງານ ເປັນທັງຂະແໜງສະໜັບສະໜູນ ແລະ ຂະແໜງສ້າງລາຍຮັບໂດຍກົງໂດຍສະເພາະການສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດແມ່ນສາມາດສ້າງລາຍຮັບໄດ້ຢ່າງຫລວງຫລາຍເຊັ່ນກັນ, ແລະ ອີງຕາມຂໍ້ມູນ ລາວເຮົາຍັງມີທ່າແຮງດ້ານແຮງງານຫລາຍຢູ່ ເນື່ອງຈາກເປັນປະເທດທີ່ມີປະຊາກອນໜຸ່ມກວມສ່ວນຫລາຍ ອີງຕາມຜົນການສຳຫຼວດກຳລັງແຮງງານຄັ້ງທີ 3 ໃນປີ 2022 ຜ່ານມາ, ພົນລະເມືອງລາວມີທັງຫມົດປະມານ 7,4 ລ້ານຄົນ, ໃນນີ້: ຜູ້ຢູ່ໃນເກນອາຍຸອອກແຮງງານ 15 ປີຂຶ້ນໄປມີປະມານ 5,3 ລ້ານຄົນ ກວມ 71,6 % ແລະ ພົນລະ ເມືອງທີ່ເປັນກຳລັງແຮງງານປະມານ 2,5 ລ້ານຄົນ ຫຼືປະມານ 47,1% ຂອງຜູ້ທີ່ຢູ່ໃນເກນອອກແຮງງານ ແລະ ຜູ້ທີ່ເຮັດວຽກໃນລະບົບ (ທັງພາກລັດ ແລະ ວິສາຫະກິດ) ທີ່ມີເງິນເດືອນກວມປະມານ 33,5% ແລະ ຜູ້ທີ່ປະກອບອາຊີບອິດສະຫລະ ແລະ ເຮັດວຽກໃຫ້ຕົນເອງທີ່ບໍ່ມີເງິນເດືອນກວມເອົາປະມານ 66,5% ແລະ ມີຜູ້ວ່າງງານ 61.000 ຄົນ ຫຼືປະມານ 2.4% ຂອງກຳລັງແຮງງານ.

### ❖ ການພັດທະນາສີມືແຮງງານ ແລະ ຈັດຫາງານ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມອົງການມະຫາພາກດ້ານແຮງງານ ມີໜ້າທີ່ໃນການດັດສົມຄວາມຕ້ອງການ ແລະ ການສະໜອງແຮງງານ ຊຶ່ງໃນແງ່ການສ້າງ ແລະ ພັດທະນາແຮງງານນັ້ນ ມີຫລາຍພາກສ່ວນ ແລະ ຂະແໜງການ ທັງພາກລັດ ແລະ ເອກະຊົນ ຮ່ວມກັນເຮັດ ສະເພາະຂະແໜງແຮງງານພັດທະນາເອງແທ້ ກໍ່ຍັງເປັນສ່ວນໜຶ່ງທີ່ໜ້ອຍຢູ່, ຕົ້ນຕໍກະຊວງແຮງງານແມ່ນສຸມໃສ່ ໃນການສ້າງນະໂຍບາຍໃນການຄຸ້ມຄອງເປັນສ່ວນໃຫຍ່ ເປັນຕົ້ນ: ການສ້າງ ນິຕິກຳ, ມາດຕະຖານສີມືແຮງງານແຫ່ງຊາດ, ປັບປຸງຫລັກສູດການພັດທະນາສີມືແຮງງານ, ຫລັກສູດການທົດສອບສີມືແຮງງານໃຫ້ເນັ້ນໃສ່ພາກປະຕິບັດຕົວຈິງ ຫຼາຍກວ່າພາກທິດສະດີ ແລະ ພະ

ຍາຍາມສົມທົບກັບຫົວໜ່ວຍແຮງງານ ເພື່ອພັດທະນາສີມືແຮງງານໃຫ້ສອດຄ່ອງກັບຄວາມຕ້ອງ ການນໍາໃຊ້ຕົວຈິງ, ທີ່ສໍາຄັນແມ່ນຈະໄດ້ສົມທົບກັນໃນການດໍາເນີນການທົດສອບ ແລະ ອອກໃບ ຢັ້ງຢືນສີມືແຮງງານໃຫ້ຜູ້ອອກແຮງ ງານຕາມມາດຕະຖານສີມືແຮງງານ ເພື່ອເປັນບ່ອນອີງໃຫ້ແກ່ການກໍານົດຄ່າແຮງງານ ແລະ ເງິນເດືອນຕາມລະດັບ ສີມືແຮງງານໃຫ້ເຫມາະສົມ;

- ແນວໃດກໍ່ຕາມການທີ່ຈະສ້າງ ແລະ ພັດທະນາສີມືແຮງງານ ກໍ່ຕ້ອງການຄວາມຮ່ວມມືຈາກທຸກຂະແໜ ງການທີ່ມີໂຄງການພັດທະນາ ຫລື ກໍານົດຍຸດທະສາດພັດທະນາເສດຖະກິດທີ່ເປັນປາຍແຫລມນັ້ນ ກໍ່ສະເໜີໃຫ້ມີ ການກໍານົດຄວາມຕ້ອງການດ້ານແຮງງານແຕ່ລະດ້ານ ທີ່ມີຄວາມຊັດເຈນ ແລະ ມີຈຸດສຸມ ລວມທັງຄວາມຕ້ອງການ ແຮງງານທັງໄລຍະສັ້ນ ແລະ ໄລຍະຍາວ ເພື່ອໃຫ້ຂະແໜງແຮງງານ ແລະ ຂະແໜງການກ່ຽວຂ້ອງ ເປັນຕົ້ນ ສຶກສາ ໄດ້ສຸມໃສ່ພັດທະນາບຸກລະຄາກອນ ເພື່ອຮອງຮັບໃສ່ຄວາມຕ້ອງການຂອງຕໍາແໜ່ງງານດັ່ງກ່າວ. ປະຈຸບັນກະຊວງ ແຮງງານໄດ້ມີໂຄງການພັດທະນາທັກສະທີ່ເປັນບຸລິມະສິດ ເພື່ອການເຕີບໂຕຂອງ ສປປ ລາວ ພາຍໃຕ້ແຜນງານເງິນກູ້ ຢືມຈາກທະນາຄານໂລກ ແມ່ນຈະສຸມໃສ່ພັດທະນາສີມືແຮງງານໃນ ສາມຂົງເຂດທີ່ເປັນບຸລິມະສິດ ເຊັ່ນ: ຂົນສົ່ງ, ກະສິກໍາ ແລະ ໄອຊີທີ.

**ສໍາລັບການແກ້ໄຂບັນຫາການຂາດແຄນແຮງງານພາຍໃນ ແລະ ການໄປອອກແຮງງານຢູ່ຕ່າງປະເທດນັ້ນ**, ຖ້າຈະວ່າ ຂາດແຄນແຮງງານ ຫລື ບໍ່ມີແຮງງານອາດຈະບໍ່ຖືກທັງໝົດ, ຕາມການລົງເກັບກໍາຂໍ້ມູນຂອງກະຊວງແຮງງານ ເຫັນ ວ່າຫົວໜ່ວຍທຸລະກິດທີ່ມີເງິນເດືອນສົມເຫດສົມຜົນ ແລະ ມີສະຫວັດດີການແຮງງານດີ ເຊັ່ນ: ນອກຈາກເງິນເດືອນ ແລ້ວ ຍັງມີອາຫານໃຫ້ 2 ຄາບ, ມີທີ່ພັກ ຫລື ລົດຮັບສົ່ງ ຫລື ຄ່າເດີນທາງໃຫ້ຖ້າບໍ່ມີລົດຮັບສົ່ງ ແລະ ອື່ນໆ ເຫັນວ່າ ບໍ່ຄ່ອຍຈະມີບັນຫາດ້ານແຮງງານ, ໃນຂະນະດຽວກັນຫົວໜ່ວຍທີ່ຍັງອີງໃສ່ແຕ່ຄ່າແຮງງານຂັ້ນຕໍ່າ ແລະ ບໍ່ປັບປຸງຄ່າ ແຮງງານໄປຕາມການເໜັງຕີງເສດຖະກິດ ແມ່ນມັກຈະມີບັນຫາດ້ານແຮງງານ.

ການຕັ້ງບັນຫາວ່າສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ ເປັນສາເຫດພາໃຫ້ຂາດແຄນແຮງງານນັ້ນ ອາດຈະບໍ່ຖືທັງ ໝົດ ເພາະຈໍານວນທີ່ໄປເຮັດວຽກຢູ່ຕ່າງປະເທດຖ້າທຽບໃສ່ກໍາລັງແຮງງານແລ້ວ ເຫັນວ່າຍັງຢູ່ໃນອັດຕາສ່ວນທີ່ຕໍ່າ, ປະຈຸບັນປະມານ 337.000 ຄົນ ໃນນີ້ໄປຖືກຕ້ອງປະມານ 134.000 ຄົນ ແລະ ໄປແບບບໍ່ຖືກຕ້ອງ 203.000 ຄົນ ຖ້າທຽບໃສ່ຜູ້ຢູ່ໃນໄວອອກ ແຮງງານທັງໝົດປະມານ 6% ຫລື ປະມານ 13% ຂອງກໍາລັງແຮງງານ ໂດຍລວມ ແລ້ວສັດສ່ວນກໍ່ບໍ່ສູງປານໃດ, ຕາມການສັງເກດແມ່ນແຮງງານບໍ່ຢາກເຂົ້າສູ່ຕະຫລາດແຮງງານພາຍໃນ ນັ້ນອາດຈະ ຫລາຍປັດໃຈ ຕົ້ນຕໍກໍ່ຈະແມ່ນຄ່າແຮງງານ ແລະ ສະຫວັດດີການແຮງງານ ຖ້າຄົນເຮົາຫາກເຫັນວ່າເຂົ້າເຮັດວຽກກໍ່ບໍ່ ພໍລ້ຽງຊີບປະຈໍາວັນ ກໍ່ຈະພະຍາຍາມໄປຊອກຫາທາງອື່ນທີ່ດີກວ່າ. ປະຈຸບັນມີຫລາຍປະເທດກໍ່ກໍາລັງຂາດແຄນແຮງ ງານພາຍໃນ ແລະ ຕ້ອງການແຮງງານຕ່າງປະເທດໄປເຮັດວຽກທົດແທນທີ່ມີຄ່າຈ້າງແຮງງານດີກວ່າ. ເບິ່ງໃນແງ່ໜຶ່ງ ເຮັດວຽກຢູ່ລາວເປັນສິບກວ່າປີກໍ່ບໍ່ມີຫຍັງ ແຕ່ໄປເຮັດວຽກຕ່າງປະເທດມາ 2-3 ປີກໍ່ສາມາດມີລົດມີເຮືອນ ບາງເທື່ອ ກໍ່ຄວນສົ່ງເສີມເຂົາເຈົ້າໃນເງື່ອນໄຂເສດຖະກິດຂອງລາວເປັນແບບນີ້ ແຕ່ຈະເຮັດແນວໃດໃຫ້ເຂົາເຈົ້າໄປຢ່າງຖືກຕ້ອງ ແລະ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ຫລື ຖືກຂູດຮີດແຮງງານ ແມ່ນຈະດີທີ່ສຸດ ເປັນການສ້າງລາຍຮັບແກ່ ຄອບຄົວ ແລະ ນໍາເງິນຕາເຂົ້າປະເທດຢ່າງຫລວງຫລາຍ ຖ້າເຮົາສົ່ງເສີມຢ່າງຖືກລະບົບ. ອີງຕາມການຄໍານວນກ່ຽວ ກັບຂໍ້ມູນດ້ານລາຍຮັບຂອງແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ ລວມທັງໄປແບບຖືກຕ້ອງ ແລະ ບໍ່ຖືກຕ້ອງ ທີ່ນໍາເງິນຕາເຂົ້າມາປະເທດສະເລ່ຍປະມານ 38 ລ້ານໂດລາຕໍ່ເດືອນ ຫລື ປະມານ 456 ລ້ານໂດລາຕໍ່ປີ.

## V. <u>ຂະແໜງພະລັງງານ ແລະ ບໍ່ແຮ່</u>

### ❖ ສະພາບໂດຍລວມຂອງຂະແໜງພະລັງງານໃນໄລຍະຜ່ານມາ.

ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາໄຟຟ້າຂອງ ສປປ ລາວ 2021-2030 ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຕັ້ງໜ້າ ແລະສືບຕໍ່ມີຈັງວະການເຕີບໂຕຢ່າງຕໍ່ເນື່ອງ, ໄດ້ປະກອບສ່ວນອັນສໍາຄັນຕໍ່ກັບອີງປະກອບໂດຍລວມ ຂອງເສດຖະກິດມະຫາພາກ. ອີງຕາມການສະຫຼຸບໃນກອງປະຊຸມສະຫຼຸບວຽກງານປະຈໍາປີຂອງຂະແໜງ ພບ ໄລຍະ 1 ປີ ຜ່ານມາ: ມູນຄ່າການຜະລິດ 89.892 ຕື້ກີບ ທຽບໃສ່ໄລຍະດຽວຂອງປີຜ່ານມາ (70.917 ຕື້ກີບ) ເພີ່ມຂຶ້ນ

27%; ຂະແໜງພະລັງງານໄຟຟ້າ ປະຕິບັດໄດ້ 58.285 ຕື້ກີບ ທຽບໃສ່ໄລຍະດຽວຂອງປີຜ່ານມາ (45.070 ຕື້ກີບ) ເພີ່ມຂຶ້ນ 29%; ຂະແໜງບໍ່ແຮ່: ປະຕິບັດໄດ້ 31.607 ຕື້ກີບ ທຽບໃສ່ໄລຍະດຽວຂອງປີຜ່ານມາ (25.847 ຕື້ກີບ) ເພີ່ມຂຶ້ນ 22%.

ປັດຈຸບັນແຫຼ່ງຜະລິດໄຟຟ້າທີ່ກຳລັງດຳເນີນງານ:ລວມທັງໝົດມີ 96 ໂຄງການ, ກຳລັງຕິດຕັ້ງປະມານ 11.800 MW, ພະລັງງານໄຟຟ້າທີ່ຜະລິດໄດ້ສະເລ່ຍປະມານ 59.500 GWh/ປີ, ເຂື່ອນໄຟຟ້ານ້ຳຕົກ 81 ໂຄງການ, ກຳລັງຕິດຕັ້ງ 9.600MW, ໄຟຟ້າຄວາມຮ້ອນຖ່ານຫີນ 3 ໂຄງການ, ລວມກຳລັງຕິດຕັ້ງ 2003 MW ນອກຈາກນີ້ຍັງມີໄຟຟ້າພະລັງງານແສງຕາເວັນ ແລະພະລັງງານຊີວະມວນຈຳນວນໜຶ່ງ. ບັນດາໂຄງການໄຟຟ້າຂະໜາດໃຫຍ່ທີ່ຂັ້ນສູນກາງຄຸ້ມຄອງທີ່ຢູ່ໃນໄລຍະກໍ່ສ້າງ 25 ໂຄງການລວມກຳລັງຕິດຕັ້ງ 11.700 MW; ໂຄງການທີ່ຢູ່ໃນໄລຍະພັດທະນາໂຄງການທີ່ມີສັນຍາ PDA ກັບລັດຖະບານ ມີ 41 ໂຄງການມີກາລັງຕິດຕັ້ງທັງໝົດ 15.500 MW, MOU ມີທັງໝົດ 295 ໂຄງການ ລວມກຳລັງຕິດຕັ້ງ 22.000 MW.

**ສາຍສົ່ງ:** ລວງຍາວທັງໝົດ 67.643 ກິໂລແມັດ/ວົງຈອນສະຖານນີໄຟຟ້າ 108 ແຫ່ງ; ອັດຕາ ການຊົມໃຊ້ໄຟບັນລຸໄດ້ 95,27% ຂອງຄົວເຮືອນທົ່ວປະເທດ ຊຶ່ງເປັນຕົວຊີ້ບອກໜຶ່ງທີ່ສຳຄັນ ແລະ ສະແດງເຖິງ ເປົ້າໝາຍພັດທະນາຍືນຍົງ ແລະ ການຫລຸດຜ່ອນຄວາມທຸກຍາກ. ການພັດທະນາແຫຼ່ງຜະລິດໄຟຟ້າເຫຼົ່ານີ້ແມ່ນເປັນໜໍ່ແໜງ ທີ່ເປັນພື້ນຖານສຳຄັນປະກອບ ສ່ວນເຂົ້າໃນການຊຸກຍູ້ສົ່ງເສີມການເຕີບໂຕຂອງເສດຖະກິດມະຫາພາກຢ່າງເປັນຮູບປະທຳ ໂດຍການສະໜັບສະໜູນໃຫ້ຂະແໜງເສດຖະກິດທີ່ປົ່ນອ້ອມມີເງື່ອນໄຂໃນການການພັດທະນາ ແລະເຕີບໂຕຢ່າງມີໄລຍະສຳຄັນເປັນຕົ້ນແມ່ນ: ດ້ານອຸດສາຫະກຳ, ກະສິກຳ, ການຜະລິດ, ການບໍລິການທ່ອງທ່ຽວ, ການຂົນສົ່ງ ແລະ ປະກອບສ່ວນແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນບັນດາ ເຜົ່າໃຫ້ດີຂຶ້ນ, ສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳທັນສະໄໝເທື່ອລະກ້າວ.

**ການສົ່ງອອກ:** ສືບຕໍ່ສົ່ງເສີມການຜະລິດໄຟຟ້າ ແລະ ພັດທະນາຕະຫຼາດພະລັງງານ ເພື່ອສົ່ງອອກ ແລະ ສ້າງລາຍຮັບໃຫ້ແກ່ປະເທດ, ເພີ້ມການແລກປ່ຽນພະລັງງານໄຟຟ້າກັບປະເທດໃກ້ຄຽງ: ຂະຫຍາຍກອບການຮ່ວມມືກັບໄທ ຈາກ 9.000 MW ມາເປັນ 10.500 MW, ກອບການຮ່ວມມືກັບ ສສ ຫວຽດນາມ 5000 MW ແລະຈະຂະຫຍາຍເປັນ 8. 000-11.000 ຮອດ 2030 ກອບຮ່ວມມືກັບສິງກະໂປ 4.000 MW ໂດຍຈະພິຈາລະນາສຶກສາສາຍສົ່ງຜ່ານ ກຳປູເຈຍ ແລະ ສາຍສົ່ງໃຕ້ນ້ຳທະເລ ຫາ ສິງກະໂປ, ນອກນັ້ນຍັງໄດ້ມີການເຊັນສັນຍາເພື່ອທົດລອງຂາຍໄຟຟ້າສູ່ຕະຫຼາດສິງກະໂປ ໂດຍຜ່ານ ໄທ ແລະ ມາເລເຊຍ (LTMS) ເປັນໄລຍະທີ່ 2 ມີແຜນຈະເພີ່ມສູງສຸດຈາກ 100 MW.

❖ **ຍຸດທະສາດ ແລະທ່າແຮງການພັດທະນາອຸດສາຫະກຳພະລັງງານຂອງ ສປປ ລາວ.**

ລັດຖະບານມີຍຸດທະສາດທີ່ຊັດເຈນໃນການພັດທະນາຂະແໜງພະລັງງານໄຟຟ້າໂດຍອີງໃສ່ທ່າແຮງບົ່ມຊ້ອນທາງດ້ານພະລັງງານໄດ້ນຳໃຊ້ທ່າແຮງດັ່ງກ່າວ ເພື່ອສ້າງການສະສົມທຶນຮອນ ແລະປະສົບການ ເພື່ອການພັດທະນາໃນໄລຍະຍາວ ໂດຍການສົ່ງເສີມໃຫ້ພາກເອກະຊົນເຂົ້າມາລົງທຶນໃນຮູບແບບສຳປະທານ ຊຶ່ງສາມາດບັນລຸໄດ້ຜົນສຳເລັດທີ່ໜ້າເພິ່ງພໍໃຈ.

ພວກເຮົາມີຊັບພະຍາກອນ ແລະມີທ່າແຮງບົ່ມຊ້ອນ ແຕ່ຂາດປັດໃຈຕ່າງໆຢ່າງຮອບດ້ານ: ທຶນຮອນ, ເຕັກນິກ, ການຕະຫຼາດ, ບົດຮຽນການຄຸ້ມຄອງບໍລິຫານໂດຍຫັນເປັນການລົງທຶນ IPP ໂຄງການທີ່ມີສັນຍາສຳປະທານແລ້ວ 50 ກ່ວາໂຄງການມູນຄ່າການລົງທຶນທັງໝົດ 30 ຕື້ກ່ວາ USD.

**ສິ່ງທີ່ເຮົາສາມາດບັນລຸໄດ້:** ຊັບສິນທີ່ເປັນໂຄງການລົງທຶນ, ສ້າງຖານລາຍຮັບທີ່ເປັນພື້ນຖານຈາກການເກັບຄ່າຊັບພະຍາກອນທຳມະຊາດ ແລະອາກອນ, ໄດ້ຕະຫຼາດສົ່ງອອກໄຟຟ້າ, ໄດ້ບົດຮຽນທາງດ້ານເຕັກນິກ, ການຄຸ້ມຄອງ

ບໍລິຫານໂຄງການຖືເປັນໂອກາດການພັດທະນາໂຄງລ່າງ, ຊົນນະບົດ ແລະພັດທະນາແບບອະເນກປະສົງເພື່ອສະໜັບສະໜູນຂະແໜງການອື່ນ...

ທ່າແຮງ ແລະໂອກາດຂອງປະເທດລາວ: ມີຊັບພະຍາກອນຢູ່ໃຈກາງຂອງປະເທດທີ່ມີການເຕີບໂຕສູງມີທ່າແຮງເປັນສູນກາງເຊື່ອມຈອດດ້ານພະລັງງານ ການຫັນເປັນອຸດສາຫະກໍາ ແລະທັນສະໄໝຂອງຂະແໜງໄຟຟ້າ ເປັນປະເພດການລົງທຶນສູງນໍາໃຊ້ເທັກໂນໂລຍີທີ່ທັນສະໄໝໃນໄລຍະກໍ່ສ້າງ ແລະດໍາເນີນງານການຫັນເປັນອຸດສາຫະກໍາແມ່ນເກີດຂຶ້ນໂດຍທັນທີ ແຕ່ປັດໃຈສໍາຄັນ ແມ່ນແຫຼ່ງຜະລິດ ແລະການເຊື່ອມຕໍ່ ກ້າວໄປສູ່ການຫັນເປັນສູນດັດສົມ ແລະຄ້າຂາຍແລກປ່ຽນພະລັງງານ.

❖ ***ທິດທາງການຈັດຕັ້ງປະຕິບັດໃນຕໍ່ໜ້າ.***

ຂະແໜງການພະລັງງານໄຟຟ້າ ຍັງແມ່ນຂະແໜງເສດຖະກິດທີ່ເປັນທ່າແຮງໃນໄລຍະຕໍ່ໜ້າ ແລະທັງເປັນຂະແໜງເສດຖະກິດສະໜັບສະໜູນຂະແໜງປາຍແຫຼມອື່ນໆ. ເຖິງວ່າຈະກໍານົດເປັນຂະແໜງເສດຖະກິດປາຍແຫຼມ ຫຼືເປັນຂະແໜງສະໜັບສະໜູນ ເຫັນວ່າບໍ່ເປັນປະເດັນ ເນື່ອງຈາກການພັດທະນາແມ່ນມີຈັງວະການຂະຫຍາຍຕົວຕໍ່ເນື່ອງຕາມຄວາມຕ້ອງການຂອງຕະຫຼາດ ແລະເປັນຂະແໜງທີ່ສະໜັບສະໜູນ ແກ່ຂະແໜງການອື່ນຢ່າງຕໍ່ເນື່ອງ:ຍັງມີທ່າແຮງບົ່ມຊ້ອນທີ່ຍັງຈະສາມາດຂຸດຄົ້ນນໍາໃຊ້ໄດ້, ເປັນຖານລາຍຮັບທີ່ໝັ້ນຄົງ, ຕໍ່ເນື່ອງ ແລະຍືນຍົງເປັນຂະແໜງເສດຖະກິດສະໜັບສະໜູນ ແລະກະຈາຍລາຍໄດ້ໃຫ້ແກ່ຂະແໜງການອື່ນ ຄວາມພ້ອມທາງດ້ານ ແຮງງານ ແລະເທັກໂນໂລຍີ ຍັງມີທ່າແຮງບົ່ມຊ້ອນທີ່ຍັງຈະສາມາດຂຸດຄົ້ນນໍາໃຊ້ໄດ້, ເປັນຖານລາຍຮັບທີ່ໝັ້ນຄົງ, ຕໍ່ເນື່ອງ ແລະຍືນຍົງ: ລາຍຮັບ ແລະຜົນປະໂຫຍດຈາກໂຄງການໄລຍະສັ້ນ ແລະໄລຍະຍາວ ລາຍຮັບຈາກການເກັບພັນທະມີລັກສະນະເພີ່ມຂຶ້ນຕໍ່ເນື່ອງໂຄງການຕ່າງໆຈະຖືກມອບໂອນຄືນໃຫ້ລັດຖະບານ(ຍົກຕົວຢ່າງໂຄງການໄຟຟ້ານໍ້າເທີນ 2) ມີລັກສະນະຕໍ່ເນື່ອງ ແລະຍືນຍົງ(ຄວາມຕ້ອງການພະລັງງານສະອາດ, ຄວາມສະຖຽນຂອງການສະໜອງພະລັງງານໃຫ້ຕະຫຼາດ) ສ້າງໃຫ້ກາຍເປັນສູນແລກປ່ຽນຊື້ຂາຍພະລັງງານຂອງພາກພື້ນດ້ວຍການເຊື່ອມໂຍງສາຍສົ່ງແລະການດັດສົມພະລັງງານແບບປະສົມປະສານເປັນຂະແໜງເສດຖະກິດສະໜັບສະໜູນ ແລະກະຈາຍລາຍໄດ້ໃຫ້ແກ່ຂະແໜງການອື່ນ ເນື່ອງຈາກການພັດທະນາໂຄງການໄຟຟ້າ ຈະເປັນແຫຼ່ງສະໜອງພະລັງງານທີ່ຈໍາເປັນ ແລະຈະສາມາດກະຈາຍຜົນປະໂຫຍດທາງກົງ ແລະທາງອ້ອມໄປສູ່ທຸກຂະແໜງການສະໜອງພະລັງງານ ເພື່ອການພັດທະນາ ແລະການສ້າງມູນຄ່າເພີ່ມຈາກຜະລິດຕະພັນ ຄວາມພ້ອມທາງດ້ານ ແຮງງານ ແລະເທັກໂນໂລຍີໜໍ່ແໜງດ້ານຊັບພະຍາກອນມະນຸດໄດ້ຮັບການພັດທະນາຢ່າງຕໍ່ເນື່ອງດ້ານເທັກໂນໂລຍີຈະໄດ້ຮັບການຖ່າຍທອດຄຽງຄູ່ກັບການພັດທະນາ, ຄຸ້ມຄອງບໍລິຫານໂຄງການ.

**ຂະແໜງພະລັງງານ ແລະບໍ່ແຮ່ ກໍາລັງສຸມໃສ່ຈັດຕັ້ງປະຕິບັດບັນດາວຽກ ຈຸດສຸມທີ່ນອນຢູ່ໃນ 12 ເປົ້າ ໝາຍ ຂອງແຜນພັດທະນາຂະແໜງການ 5 ປີ ຄັ້ງທີ IX (2021-2025) ດັ່ງລຸ່ມນີ້:**

1) ພັດທະນາການສະໜອງພະລັງງານໄຟຟ້າ ໃຫ້ມີສະຖຽນລະພາບ ແລະ ໝັ້ນຄົງ, ສົມຄູ່ກັບຄວາມຕ້ອງການນໍາໃຊ້ພາຍໃນ ແລະ ການສົ່ງອອກ.
2) ພັດທະນາລະບົບສາຍສົ່ງໄຟຟ້າສໍາລັບການສະໜອງໄຟຟ້າພາຍໃນ ແລະ ສົ່ງອອກ.
3) ການພັດທະນາລະບົບຈໍາໜ່າຍ ແລະ ການບໍລິການໄຟຟ້າ.
4) ຂະຫຍາຍການຊົມໃຊ້ໄຟຟ້າສູ່ຊົນນະບົດດ້ວຍຫຼາຍຮູບແບບ.
5) ສົ່ງເສີມການນໍາໃຊ້ພະລັງງານສະອາດເຂົ້າໃນການຄົມມະນາຄົມ ແລະ ຂົນສົ່ງ.
6) ສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ.

7) ການພັດທະນາກົນໄກບໍລິຫານຈັດການ, ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການບັງຄັບໃຊ້ກົດໝາຍ.

8) ສ້າງຄວາມເຂັ້ມແຂງໃຫ້ບັນດາລັດວິສາຫະກິດອ້ອມຂ້າງກະຊວງ.

9) ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະການເຕີບໂຕສີຂຽວ (GG) ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ.

10) ສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ.

11) ສຳຫຼວດສ້າງຂໍ້ມູນພື້ນຖານດ້ານທໍລະນີສາດ ແລະ ແຮ່ທາດ ແລະ ປະເມີນ ຊັບພະຍາກອນແຮ່ທາດທົ່ວປະເທດ.

12) ການກຳນົດນະໂຍບາຍການບໍລິຫານຈັດການ/ຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ.

**ເພື່ອສືບຕໍ່ຊຸກຍູ້ການພັດທະນາການພັດທະນາໂຄງການໄຟຟ້າ ໃຫ້ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະຍືນຍົງ:**

ພວກເຮົາຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂດ້ານກົນໄກໃໝ່ໃນການພັດທະນາຂະແໜງພະລັງງານ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນສຸມ ການສ້າງແຜນ PDP ຕິດພັນກັບການວາງແຜນແຫຼ່ງຜະລິດ, ລະບົບສາຍສົ່ງ-ສະຖານີ, ການເຈລະຈາຫາຕະຫຼາດຈຳໜ່າຍອອກຕ່າງປະເທດ, ຫຼຸດຜ່ອນການນຳເຂົ້າໄຟຟ້າ ແລະຊຸກຍູ້ໃຫ້ມີການພັດທະນາອຸດສາຫະກຳຂະໜາດໃຫຍ່ພາຍໃນປະເທດຢ່າງກົມກຽວ ເພື່ອສົ່ງເສີມການນຳໃຊ້ໄຟຟ້າໃຫ້ຫຼາຍຂຶ້ນ.

ສືບຕໍ່ພັດທະນາຂະແໜງພະລັງງານໄຟຟ້າໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມໃນການຂັບເຄື່ອນ ໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ດ້ວຍການເປັນແຮງຍູ້ດັນໃຫ້ແກ່ການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງເສດຖະກິດອື່ນໆຢ່າງກົມກຽວ.

ຫັນການພັດທະນາຂະແໜງພະລັງງານໃຫ້ກາຍເປັນອຸດສາຫະກຳພະລັງງານຢ່າງເຕັມຮູບແບບ ໂດຍມີການເຊື່ອມໂຍງແບບກາຍອິນຊີລະຫວ່າງການພັດທະນາພະລັງງານກັບການຫັນເປັນອຸດສາຫະກຳ ແລະທັນສະໄໝໃນທຸກຂະແໜງການ ດ້ວຍການຫັນອຸດສາຫະກຳພະລັງງານໃຫ້ກາຍເປັນຈຸດໃຈກາງຂອງການຫັນເປັນອຸດສາຫະກຳທີ່ທັນສະໄໝຢ່າງມີແຜນການ ແລະຍືນຍົງ ດ້ວຍການແຜ່ກະຈາຍລາຍຮັບຈາກການພັດທະນາໂຄງການໄຟຟ້າ ໃຫ້ກັບທຸກຂະແໜງເສດຖະກິດ-ສັງຄົມ, ຄຽງຄູ່ກັນນັ້ນກໍຮັບປະກັນການສະໜອງພະລັງງານໄຟຟ້າດ້ວຍຄຸນນະພາບ ແລະ ມີປະສິດທິຜົນສູງ ເພື່ອສະໜັບສະໜູນໃຫ້ຂະແໜງການອື່ນມີເງື່ອນໄຂໃນການເຕີບໂຕຢ່າງຕໍ່ເນື່ອງ.

ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາພື້ນຖານໂຄງລ່າງ, ນຳເອົາຜົນປະໂຫຍດທາງກົງ ແລະທາງອ້ອມມາໃຫ້ລັດຖະບານ ກໍຄືປະຊາຊົນທ້ອງຖິ່ນທີ່ໂຄງການຕັ້ງຢູ່ ດ້ວຍການສ້າງຕຳແໜ່ງງານ, ສ້າງວຽກເຮັດງານທຳ, ແຜ່ກະຈາຍຜົນປະໂຫຍດຈາກການພັດທະນາໂຄງການຕໍ່ກັບການພັດທະນາສັງຄົມ-ວັດທະນະທຳ ແລະຊີວິດການເປັນຢູ່ຂອງປະຊາຊົນໃຫ້ກ້ວາງຂວາງ, ເລິກເຊິ່ງ ແລະຍືນຍົງ.

## VI. <u>ຂະແໜງໂຍທາທິການ ແລະ ຂົນສົ່ງ</u>

ໂລຈິດສຕິກ ແລະ ການຂົນສົ່ງ ຍັງສາມາດເປັນເສດຖະກິດປາຍແຫຼມໄດ້ ຍ້ອນລັດຖະບານຍັງຖືເປັນບູລິມາສິດສຳຄັນ ແລະສຸ່ມໃສ່ຢ່າງຫຼວງຫຼາຍ ຍົກຕົວຢ່າງກໍ່ຄືທ່າບົກຕ່າງໆ ເຊັ່ນ: ທ່າບົກທ່ານະແລ້ງເຊິ່ງເປັນບ່ອນແລກປ່ຽນສິນຄ້າ ນອກຈາກນັ້ນກໍ່ຍັງມີທ່າເຮືອວັງອ່າງທີ່ສາມາດແລກປ່ຽນສິນຄ້າ ເຊິ່ງແຕ່ລະບ່ອນແມ່ນສາມາດເກັບລາຍຮັບໄດ້ຢ່າງຫຼວງຫຼາຍ. ກ່ຽວກັບບັນຫາໃນການສ້າງເສັ້ນທາງຕ່າງໆແມ່ນມີງົບປະມານບໍ່ພຽງພໍ ນອກຈາກນັ້ນຍັງໄດ້ກູ້ຢືມເງິນ

ຈາກອົງການຈັດຕັ້ງສາກົນຕ່າງໆ, ການຊ່ວຍເຫຼືອຈາກປະເທດເພື່ອນບ້ານ, ການລົງທຶນຈາກ ສປ ຈີນ. ແລະ ຂໍສະເໜີໃຫ້ສຶກສາຄົ້ນຄວ້າເພີ່ມຕື່ມສໍາລັບເຂດແຄວ້ນ ເຮົາສາມາດເຮັດເປັນອັນລວມຂອງປະເທດໄດ້ບໍ ວ່າເຂດແຄວ້ນໃດທີ່ເປັນທ່າແຮງແທ້ໆ ເຂດແຄວ້ນໃດຄວນສຸມໃສ່ອັນໃດ.

## VII. <u>ຂະແໜງເຕັກໂນໂລຊີ ແລະ ການສື່ສານ</u>

ລັດຖະບານດີຈີຕອນແມ່ນໝາຍເຖິງ ລັດຖະບານທີ່ນໍາເອົາເຕັກໂນໂລຊີດີຈີຕອນ ເຂົ້າມານໍາໃຊ້ໃນວຽກງານບໍລິຫານ ແລະ ການບໍລິຫານລັດ ແລະ ມີລະບົບເຊື່ອມໂຍງເຂົ້າເຖິງຂໍ້ມູນລະຫວ່າງພາກລັດ, ພາກທຸລະກິດ ແລະ ປະຊາຊົນ ເປັນສ່ວນສໍາຄັນເພື່ອເພີ່ມປະສິດທິພາບຂອງວຽກງານໃຫ້ທັນສະໄໝວ່ອງໄວ, ໂປ່ງໃສ. ນໍາໃຊ້ເຕັກໂນໂລຊີດີຈີຕອນໃນການບໍລິການອໍານວຍຄວາມສະດວກໃຫ້ແກ່ພາກລັດ, ພາກທຸລະກິດ ແລະ ປະຊາຊົນ. ເຊິ່ງ 3 ເສົາຄໍ້າຂອງແ◌ັ◌່ນການຫັນເປັນດິຈິຕອນຂອງ ສປປ ລາວ ມີຄື: ເສດຖະກິດດິຈິຕອນ, ລັດຖະບານດິຈິຕອນ ແລະ ສັງຄົມດິຈິຕອນ.

ຜົນການປະເມີນ UN E-Government Index 2022 ສໍາລັບ ສປປ ລາວ ແມ່ນຢູ່ອັນດັບ 159 ປຽບທຽບກັບປະເທດ CLMV (ປະເທດກໍາລັງພັດທະນາ) ມຽນມາ 134, ກໍາປູເຈຍ 127, ຫວຽດນາມ 86.

ການພັດທະນາລະບົບບໍລິຫານ ແລະ ບໍລິການດີຈີຕອນຂອງ ສປປ ລາວ ມີລະບົບ G2G ແລະ ລະບົບ G2C: **ລະບົບບໍລິຫານພາກລັດ G2G ມີ**: ລະບົບ E-Office, ລະບົບ Email ລັດຖະການ, ລະບົບແບ່ງປັນເອກະສານ (G-share G-drive), ລະບົບເຄື່ອຂ່າຍອິນເຕີເນັດພາຍໃນພາກລັດ (G-NET), ລະບົບເວັບໄຊພາກລັດ (G-Web Platform), ລະບົບ Vedio Conference, ລະບົບ G-Chat, ລະບົບປະຕູຖານຂໍ້ມູນແຫ່ງຊາດ (E-portal), ລະບົບ (G-Helpdesk), ລະບົບເຕັກໂນໂລຊີພາສາລາວ, **ລະບົບບໍລິຫານດີຈີຕອນສູ່ປະຊາຊົນ G2C ມີ:** ລະບົບຢືນຢັນຂໍ້ມູນ (LaoKYC), Laopedia ກະດານຂ່າວຊູມຊົນພາກລັດ, ລະບົບການສຶກສາອອນລາຍ E-Learning, E-library, ລະບົບສາທາລະນະສຸກ E-Health E-Care, ຈາກຂະແໜງອື່ນໆ Job portal E-Visa.

❖ **ການສົ່ງເສີມການນໍາໃຊ້**

- ລະບົບເອກະສານພາກລັດ e-office, ລະບົບ ຈົດຫມາຍເອເລັກໂຕນິກ email, G-Chat ແລະ G-Share ໃຫ້ໄດ້ 100%.
- ຊຸກຍູ້ສົ່ງເສີມ ນໍາໃຊ້ລະບົບບໍລິຫານລັດ G20 ທີ່ມີຢູ່ ໃຫ້ຫຼາຍຂຶ້ນ, ໂດຍສະເພາະ ບັນດາ ແຂວງ, ເມືອງ ແລະ ບ້ານ.
- ຄົ້ນຄວ້າ ການບໍລິການດິຈິຕອນ ຈາກພາກລັດ ສູ່ ທຸລະກິດ ແລະ ປະຊາຊົນ ໂດຍຈັດບູລິມະ ສິດ ບໍລິການໃດ ທີ່ສໍາຄັນ ແລະ ເອົາຜູ້ຊົມໃຊ້ ເປັນໃຈກາງ

❖ **ແຜນການຕໍ່ຫນ້າ**

- ແຜນສ້າງຕົວຊີ້ວັດ ການພັດທະນາລັດຖະບານດິຈິຕອນ
- ສ້າງແພດຟອມການແລກປ່ຽນຂໍ້ມູນລັດຖະບານດິຈິຕອນ GDX- Government Data Exchange
- ສ້າງແຜນຜັງການພັດທະນາລະບົບ Data Portal ສໍາລັບ ບໍລິການປະຊາຊົນ

- ສ້າງລະບົບຂໍ້ມູນເປີດຂອງພາກລັດ (Open Government Data) ເພື່ອໃຫ້ພາກລັດ, ພາກທຸລະກິດ ແລະ ປະຊາຊົນໄດ້ນຳ ໃຊ້ຂໍ້ມູນທີ່ສາມາດເປີດເຜີຍຂອງພາກລັດ ສະດວກຍິ່ງຂຶ້ນ.
- ສ້າງມາດຕະຖານເຕັກນິກ ການເຊື່ອມຕໍ່ ແລະ ເຊື່ອມໂຍງບັນດາລະບົບພາກລັດ

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານ ເພື່ອຮັບຊາບ.